ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ກະຊວງການເງິນ

ກົມສ່ວຍສາອາກອນ

4698

ເລກທີ........../ກງ.ກສອ

ນະຄອນຫລວງວຽງຈັນ,ວັນທີ 03 AUG 2016

## ແຈ້ງການເພີ່ມເຕີມ

**ເຖິງ:** - ທ່ານຫົວໜ້າພະແນກຄຸ້ມຄອງເກັບລາຍຮັບ ກົມສ່ວຍສາອາກອນ, ຫົວໜ້າພະແນກສ່ວຍສາອາກອນປະຈຳແຂວງ, ນະຄອນຫຼວງວຽງຈັນ ໃນຂອບເຂດທົ່ວປະເທດ.

- ທ່ານຜູ້ອຳນວຍການ ວິສາຫະກິດ/ບໍລິສັດ ທີ່ນຳເຂົ້າ ແລະຈຳໜ່າຍນໍ້າມັນເຊື້ອໄຟຢູ່ໃນຂອບເຂດທົ່ວປະເທດ.

**ເລື່ອງ** : ການຄິດໄລ່ເກັບ ແລະ ແຈ້ງມອບ ອາກອນມູນຄ່າເພີ່ມ ຈາກການນຳເຂົ້າ ແລະ ຈຳໜ່າຍນໍ້າມັນເຊື້ອໄຟຢູ່ພາຍໃນປະເທດ.

- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງເລກທີ 70/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບປັບປຸງເລກທີ 52/ສພຊ, ລົງວັນທີ 23 ກໍລະກົດ 2014;
- ອີງຕາມ ແຈ້ງການຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 745/ກງ.ຫກ, ລົງວັນທີ 28 ມີນາ 2016.

ກົມສ່ວຍສາອາກອນ ຂໍແຈ້ງການເພີ່ມເຕີມມາຍັງທ່ານຊາບ ກ່ຽວກັບການຈັດຕັ້ງປະຕິບັດ ເນື້ອໃນຂໍ້ທີ 5 ຂອງແຈ້ງການຂອງຫ້ອງການ ກະຊວງການເງິນ ສະບັບເລກທີ 745/ກງ.ຫກ,ລົງວັນທີ 28 ມີນາ 2016 ໃຫ້ປະຕິບັດເປັນເອກະພາບກັນ ຄືດັ່ງນີ້:

1. ບໍລິສັດ ທີ່ນຳເຂົ້າ ນ້ຳມັນເຊື້ອໄຟ ໃນຂອບເຂດທົ່ວປະເທດ ໃຫ້ແຈ້ງເສຍອາກອນມູນຄ່າເພີ່ມ ເປັນແຕ່ລະເດືອນ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ພາຍຫຼັງທີ່ມີການຈຳໜ່າຍນ້ຳມັນເຊື້ອໄຟ ຢູ່ພາຍໃນປະເທດ ຕາມຈຳນວນເງິນ ອາກອນມູນຄ່າເພີ່ມ ສ່ວນຜິດດ່ຽງໃນເວລາຂາຍຍົກ ທີ່ຕ້ອງມອບຕື່ມ ທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ໃນແຕ່ລະໄລຍະ. ໃນກໍລະນີ ທີ່ນຳເອົານ້ຳມັນເຊື້ອໄຟ ມາຈາກຕ່າງປະເທດ (ແຕ່ບໍ່ແມ່ນການເຄື່ອນຍ້າຍ) ເພື່ອລິງສາງຢູ່ແຂວງໃດ ແຂວງໜຶ່ງ ແມ່ນໃຫ້ມອບຈຳນວນເງິນອາກອນມູນຄ່າເພີ່ມ ສ່ວນຜິດດ່ຽງໃນເວລາຂາຍຍົກ ທີ່ຕ້ອງມອບຕື່ມ ຕາມໂຄງສ້າງລາຄານ້ຳມັນແຕ່ລະໄລຍະ ໃຫ້ພະແນກສ່ວຍສາອາກອນປະຈຳແຂວງນັ້ນ;
2. ບໍລິສັດທີ່ນຳເຂົ້າ ແລະ ຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ສະໜອງຂໍ້ມູນ ໂຄງສ້າງພື້ນຖານໂຄງລ່າງ, ແຜນການນຳເຂົ້າ ແລະ ແຜນການຈຳໜ່າຍນ້ຳມັນເຊື້ອໄຟ ປະຈຳປີ ໃຫ້ກົມສ່ວຍສາອາກອນ ກ່ອນວັນທີ 01 ມີນາ ຂອງທຸກໆປີ ຢ່າງເປັນລະບົບປົກກະຕິ;
3. ການຄິດໄລ່ ອາກອນມູນຄ່າເພີ່ມເບື້ອງສິ້ນອອກ ແມ່ນໃຫ້ເອົາມູນຄ່າ ຫຼື ລາຄາຂາຍຍົກ ບໍ່ລວມມີອາກອນມູນຄ່າເພີ່ມ ຄູນກັບ ອັດຕາອາກອນມູນຄ່າເພີ່ມ, ພ້ອມທັງອອກໃບເກັບເງິນ ຕາມການຄິດໄລ່ດັ່ງກ່າວ. ອາກອນມູນຄ່າເພີ່ມທີ່ຕ້ອງມອບຕື່ມ ແມ່ນໃຫ້ເອົາ ອາກອນມູນຄ່າເພີ່ມເບື້ອງສິ້ນອອກ ຕາມຈຳນວນນ້ຳມັນທີ່ໄດ້ຂາຍໃນເດືອນ ລົບໃຫ້ ຈຳນວນ ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ ຂອງຈຳນວນນ້ຳມັນທີ່ໄດ້ຂາຍໃນເດືອນ ທີ່ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ ແຕ່ລະໄລຍະ.
4. ການລາຍງານ ການເຄື່ອນໄຫວເບື້ອງສິ້ນອອກ ແລະ ເບື້ອງສິ້ນເຂົ້າ ຫຼື ການປະກອບໃບແຈ້ງ ອາກອນມູນຄ່າເພີ່ມ ແມ່ນໃຫ້ເອົາມູນຄ່າ ບໍ່ລວມອາກອນມູນຄ່າເພີ່ມທັງໝົດໃນເດືອນຕາມຈຳນວນນ້ຳມັນທີ່ໄດ້ຂາຍໃສ່ໃນຫ້ອງທີ 15, ສ່ວນຫ້ອງທີ 19 ແມ່ນ ຈຳນວນເງິນ ອາກອນມູນຄ່າເພີ່ມເບື້ອງສິ້ນອອກ ແລະ ໃຫ້ປະກອບຂໍ້ມູນ: ມູນຄ່າຊື້ທັງໝົດ ຂອງຈຳນວນນ້ຳມັນທີ່ໄດ້ຂາຍໃນເດືອນເຂົ້າໃສ່ຫ້ອງທີ 23, ສ່ວນຫ້ອງທີ 29 ແມ່ນ ຈຳນວນເງິນ ອາກອນມູນຄ່າເພີ່ມເບື້ອງສິ້ນເຂົ້າ ແລະ ຈະເກີດມີ ອາກອນມູນຄ່າເພີ່ມ ທີ່ຕ້ອງມອບ ຢູ່ຫ້ອງທີ 44 ຂອງໃບແຈ້ງ ຊຶ່ງຈະເທົ່າກັບ ຈຳນວນອາກອນມູນຄ່າເພີ່ມທີ່ຕ້ອງມອບຕື່ມແຕ່ລະໄລຍະ ຄູນກັບ ຈຳນວນ ນ້ຳມັນທີ່ໄດ້ຂາຍອອກ ຕາມໂຄງສ້າງລາຄານ້ຳມັນເຊື້ອໄຟ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມສ່ວຍສາອາກອນ

ສົງວອນ ພັນທະວົງ

<u>ສຳເນົານຳສົ່ງ:</u>

- ທ່ານ ລັດຖະມົນຕີ ກະຊວງການເງິນ 1 ສະບັບ ເພື່ອໃຊ້ຕ່າງລາຍງານ;
- ທ່ານ ຮອງລັດຖະມົນຕີ ກະຊວງການເງິນ 1 ສະບັບ ເພື່ອໃຊ້ຕ່າງລາຍງານ;
- ຫ້ອງການກະຊວງອຸດສາຫະ ແລະ ການຄ້າ 1 ສະບັບ ເພື່ອຊາບ ແລະ ປະຕິບັດ;
- ສະພາອຸດສາຫະກຳ ແລະ ການຄ້າ, ປະທານກຸ່ມທຸລະກິດນ້ຳມັນເຊື້ອໄຟ 1 ສະບັບ ເພື່ອຊາບ ແລະ ປະຕິບັດ;
- ພະແນກຄຸ້ມຄອງເກັບລາຍຮັບ ກົມສ່ວຍສາອາກອນ 1 ສະບັບ ເພື່ອປະຕິບັດ
- ພະແນກສ່ວຍສາອາກອນ ປະຈຳແຂວງ, ນະຄອນຫຼວງ ແຂວງລະ 1 ສະບັບ ເພື່ອປະຕິບັດ.